ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຫ້ອງການ

0974

ເລກທີ /ກຊສ.ຫກ

ນະຄອນຫຼວງ ວຽງຈັນ, ວັນທີ 17 / 3 / 2017

# ແຈ້ງການ

**ເຖິງ:** ບັນດາ ທ່ານ ຫົວໜ້າ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ສ້າງຂະບວນການ ເນື່ອງໃນໂອກາດ ວັນນໍ້າໂລກ 22 ມີນາ 2017.**

- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງແລະການເຄື່ອນໄຫວ ຂອງ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະບັບເລກທີ 435/ນຍ ລົງວັນທີ 28.11.2011;
- ອີງຕາມ ແຜນການເຄື່ອນໄຫວ ແລະ ຂໍທິດຊີ້ນຳ ໃນການສ້າງຂະບວນການ ເນື່ອງໃນໂອກາດ ວັນນໍ້າໂລກ ປີ 2017, ສະບັບເລກທີ 188/ ກຊນ, ລົງວັນທີ 3 ມີນາ 2017.

ຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂໍຖືເປັນກຽດ ສະເໜີ ແຈ້ງມາຍັງບັນດາທ່ານ ຊາບວ່າ: ເນື່ອງໃນໂອກາດ ວັນນໍ້າໂລກ 22 ມີນາ 2017, ທີ່ຈະໄດ້ໝູນວຽນມາຄົບຮອບ 23 ປີ, ຊຶ່ງປີນີ້ ແມ່ນດຳເນີນ ພາຍໃຕ້ຄຳຂັວນ **"ນໍ້າ ແລະ ນໍ້າເປື້ອນ" (water &waste water)** ຊຶ່ງມີເປົ້າໝາຍ ເພື່ອປຸກລະດົມ ປວງຊົນລາວທັງຊາດ ເຂົ້າຮ່ວມ ແລະ ມີສ່ວນຮ່ວມ ຢ່າງຕັ້ງໜ້າ ໃນການຄຸ້ມຄອງ ຊັບພະຍາກອນນໍ້າ ໃຫ້ມີຄວາມຍືນຍົງ ເປັນຕົ້ນແມ່ນບັນດາຂະແໜງການອ້ອມຂ້າງ ແຂວງ, ນະຄອນຫຼວງ, ອຳນາດການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມ ເຂົ້າຮ່ວມປະກອບສ່ວນ ປະຕິບັດພັນທະຂອງຕົນ ໃນການສ້າງຂະບວນການຄືກັນກັບຫຼາຍປະເທດໃນໂລກ. ທີ່ກຳລັງສ້າງຂະບວນການຂໍານັບຮັບຕ້ອນວັນນໍ້າໂລກ ໃນປີ 2017, ທັງເປັນການຂໍານັບຮັບຕ້ອນ ການສະເຫຼີມສະຫຼອງວັນປະຫວັດສາດຂອງຊາດ ໃນປີ 2017 ນີ້. ສະນັ້ນ, ຈຶ່ງມີ ຄວາມຈຳເປັນສະເໜີ ມາຍັງບັນດາທ່ານຊາບ ແລະ ຈັດກິດຈະກຳ ເນື່ອງໃນໂອກາດ ວັນດັ່ງກ່າວ ຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ.

ດັ່ງນັ້ນ, ຫ້ອງການ ກຊສ ຈຶ່ງຂໍຖືເປັນກຽດ ສະເໜີ ແຈ້ງມາຍັງທ່ານ ເພື່ອຊາບ ຕາມທາງຄວນດ້ວຍ.

ຫົວໜ້າ ຫ້ອງການ

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຫ້ອງການ

ບຸນຕີ ເດດວົງສອນ